ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ນະຄອນຫລວງວຽງຈັນ, ວັນທີ 14 MAR 2014

# ມະຕິ
# ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ດຳເນີນໃນວັນທີ 07 ກຸມພາ 2014 ທີ່ ໂຮງແຮມລ້ານຊ້າງ ນະຄອນ ຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ດຣ. ພັນຄຳ ວິພາວັນ, ກຳມະການ ກົມການເມືອງສູນກາງພັກ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານສະມາຊິກຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ, ຄະນະຮັບຜິດຊອບກອງປະຊຸມ ລວມທັງໝົດ 34 ທ່ານ ຍິງ 8 ທ່ານ.

ກອງປະຊຸມໄດ້ນຳສະເໜີບັນດາເອກະສານຕ່າງໆດັ່ງນີ້:
(1) ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ; ລົງວັນທີ 22/11/2013; (2) ຮ່າງຂໍ້ຕົກລົງຂອງປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ວ່າດ້ວຍການແບ່ງໜ້າທີ່ຄວາມຮັບຜິດຊອບຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ; (3) ຮ່າງຂໍ້ຕົກລົງ ຂອງປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການວິຊາການ ແລະ ກອງເລຂາ ຄຊພຊ; (4) ແຜນວຽກໂດຍສັງເຂບຂອງຄະນະ ຄຊພຊ; (5) ການຮ່ວມມືກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດ ລະຫວ່າງກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ແລະ ກະຊວງສຶກສາ ແລະ ກໍ່ສ້າງຂອງ ສສ ຫວຽດນາມ. ຜ່ານການຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ ຜູ້ແທນກອງປະຊຸມ ໄດ້ມີຄວາມເປັນເອກະພາບຮັບຮອງເອົາບາງບັນຫາສຳຄັນ ເປັນມະຕິກອງປະຊຸມ ດັ່ງນີ້:

1. ເຫັນດີ ນຳເອົາດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ; ລົງວັນທີ 22/11/2013 ໄປຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ໜ້າທີ່ ຄວາມຮັບຜິດຊອບຂອງແຕ່ລະທ່ານໃຫ້ໄດ້ຮັບຜົນດີ.

2. ເຫັນດີໂດຍພື້ນຖານຕໍ່ຮ່າງຂໍ້ຕົກລົງ ຂອງປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ວ່າດ້ວຍການແບ່ງໜ້າທີ່ຄວາມຮັບຜິດຊອບຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແຕ່ໃຫ້ກອງເລຂາປັບປຸງຄືນບາງເນື້ອໃນ ແລະ ຄຳສັບ ຕາມຄຳເຫັນຂອງຜູ້ແທນກອງປະຊຸມ.
3. ກອງປະຊຸມບໍ່ເຫັນດີໃຫ້ແຕ່ງຕັ້ງຄະນະກຳມະການວິຊາການຕື່ມ ເນື່ອງຈາກວ່າຄະນະກຳມະການວິຊາການມີຈຳນວນຫຼາຍ ຈະເຮັດໃຫ້ມີຄວາມຫຍຸ້ງຍາກໃນການເຕົ້າໂຮມ ຫຼື ເຂົ້າຮ່ວມປະຊຸມຄົ້ນຄວ້າຢ່າງຄົບໜ້າ ແລະ ເປັນປົກກະຕິ. ແຕ່ກອງປະຊຸມເຫັນດີ (1) ໃຫ້ແຕ່ລະກະຊວງ ແລະ ອົງການທຽບເທົ່າກະຊວງ ທີ່ເປັນສະມາຊິກຂອງ ຄຊພຊ ແຕ່ງຕັ້ງຄະນະປະສານງານກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດຢູ່ໃນອົງກອນຂອງຕົນ ຊຶ່ງປະກອບດ້ວຍຫົວໜ້າກົມ ຫຼື ຮອງກົມທີ່ເຮັດວຽກຕິດພັນກັບການພັດທະນາຊັບພະຍາກອນມະນຸດ ພ້ອມດ້ວຍຫົວໜ້າພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ ເພື່ອຊ່ວຍວຽກບັນດາສະມາຊິກ ຄຊພຊ, ເຂົ້າຮ່ວມກອງປະຊຸມລະດັບວິຊາການ ແລະ ປະສານງານໂດຍກົງກັບກອງເລຂາ ຂອງຄະນະກຳມາທິການແຫ່ງຊາດເພື່ອພັດທະນາຊັບພະຍາກອນມະນຸດ ທີ່ມີຫ້ອງການຕັ້ງຢູ່ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. (2) ສຳລັບບັນດາກະຊວງ ແລະ ອົງການທຽບເທົ່າ ທີ່ບໍ່ທັນມີສະມາຊິກໃນ ຄຊພຊ, ໃຫ້ກອງເລຂາເຮັດໜັງສືເຖິງພາກສ່ວນດັ່ງກ່າວ ເພື່ອສະເໜີໃຫ້ແຕ່ງຕັ້ງຄະນະປະສານງານກ່ຽວກັບວຽກງານການພັດທະນາຊັບພະຍາກອນມະນຸດຢູ່ໃນພາກສ່ວນຕົນ ເພື່ອເປັນຈຸດປະສານງານ ແລະ ເຮັດວຽກຮ່ວມກັບກອງເລຂາ ຄຊພຊ.
4. ຮັບຮອງເອົາເບື້ອງຕົ້ນຕໍ່ແຜນວຽກຈຸດສຸມຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ມອບໃຫ້ກອງເລຂານຳໄປຄົ້ນຄວ້າ ສ້າງເປັນແຜນປະຕິບັດງານລະອຽດຕື່ມ.
5. ເຫັນດີໃຫ້ສືບຕໍ່ການຮ່ວມມື ລະຫວ່າງກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ແລະ ກະຊວງສຶກສາ ແລະ ກໍ່ສ້າງຂອງ ສສ ຫວຽດນາມ ໃນການພັດທະນາຊັບພະຍາກອນມະນຸດ. ແຕ່ໃຫ້ເອົາໃຈໃສ່ປັບປຸງຄືນວິທີການຄັດເລືອກເອົາຜູ້ໄປຮຽນ, ມາດຖານ ແລະ ເງື່ອນໄຂ ເພື່ອເຮັດໃຫ້ການສັບຊ້ອນໄປຮຽນ ຖືກຕ້ອງ ສອດຄ່ອງກັບຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.
6. ມອບໃຫ້ກອງເລຂາຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດເປັນໃຈກາງໃນການປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ, ຕິດຕາມ, ຊຸກຍູ້ການປັບປຸງຍຸດທະສາດພັດທະນາຊັບພະຍາກອນມະນຸດ ແລະ ລາຍງານໃຫ້ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ກໍ່ຄືລັດຖະບານຮັບຊາບເປັນແຕ່ລະໄລຍະ.
7. ກອງປະຊຸມວິສາມັນຄັ້ງຕໍ່ໄປຈະຈັດຂຶ້ນໃນລະຫວ່າງເດືອນ ມິຖຸນາ (6) 2014.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

ດຣ.ພັນຄຳ ວິພາວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
====000====

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

0907

ເລກທີ /ສສກ.ຄຊພຊ
ນະຄອນຫຼວງວຽງຈັນ, ວັນທີ 14 MAR 201

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງໜ້າທີ່ຄວາມຮັບຜິດຊອບ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013.

## ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ຕົກລົງ:

ມາດຕາ 1. ຄະນະກຳມາທິການທຸກທ່ານ ມີພາລະ ບົດບາດ ໜ້າທີ່ ແລະ ຄວາມຮັບຜິດຊອບຮ່ວມກັນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013; ນອກຈາກນັ້ນ ຍັງແບ່ງໜ້າທີ່ຄວາມຮັບຜິດຊອບໃຫ້ຄະນະກຳມາທິການແຕ່ລະທ່ານລົງເລິກຕື່ມ ດັ່ງນີ້:

1. ທ່ານ ດຣ ພັນຄຳ ວິພາວັນ — ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດ ຄຊພຊ, ຮັບຜິດຊອບຊີ້ນຳລວມ.
2. ທ່ານ ສົມດີ ດວງດີ — ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ, ຮອງປະທານ ຄຊພຊ, ຮັບຜິດຊອບຊີ້ນຳລົງເລິກໃນການສ້າງແຜນງົບປະມານການຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນດ້ານວຽກງານການວາງແຜນງົບປະມານການພັດທະນາຊັບພະຍາກອນມະນຸດ.
3. ທ່ານ ດຣ. ອ່ອນແກ້ວ ພົມມະກອນ — ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ຮອງປະທານ ຄຊພຊ, ຮັບຜິດຊອບຊີ້ນຳໃນການສ້າງແຜນຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນດ້ານການບຳລຸງຍົກລະດັບພະນັກງານຂັ້ນສູນກາງຄຸ້ມຄອງ.
4. ທ່ານ ດຣ. ຊົມພູ ດວງສະຫວັນ — ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ, ຮອງປະທານ ຄຊພຊ, ຮັບຜິດຊອບຊີ້ນຳລົງເລິກ ດ້ານການຕິດຕາມ, ປະເມີນຜົນການຈັດຕັ້ງ

ປະຕິບັດຍຸດທະສາດ, ແຜນປະຕິບັດງານ, ແຜນການ ແລະ ໂຄງການພັດທະນາຊັບພະຍາ ກອນມະນຸດ.

5. ທ່ານ ນ. ແສງເດືອນ ຫຼ້າຈັນທະບູນ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ, ກຳມະການ ຄຊພຊ, ຮັບຜິດຊອບຊ່ວຍວຽກປະທານ ລົງເລິກໃນການຊີ້ນຳ ກອງເລຂາ ຄຊພຊ ແລະ ວຽກງານອື່ນໆ ເພື່ອສ້າງແຜນການພັດທະນາຊັບພະຍາກອນມະນຸດແຫ່ງຊາດເປັນແຕ່ລະໄລຍະ.

6. ທ່ານ ດຣ. ຄຳລຽນ ພົນເສນາ ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳ ການຈັດສົມແຜນພັດທະນາຊັບພະຍາກອນມະນຸດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ຈັດສັນງົບປະມານລົງທຶນເຂົ້າໃນການພັດທະນາ ແລະ ກໍ່ສ້າງຊັບພະຍາກອນມະນຸດຕາມແນວທາງນະໂຍບາຍຂອງພັກ, ປະສານງານກັບຜູ້ໃຫ້ທຶນຕ່າງໆ.

7. ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ, ກຳມະການ ຄຊພຊ, ຮັບຜິດຊອບການຈັດສັນງົບປະມານເຂົ້າໃສ່ວຽກງານພັດທະນາຊັບພະຍາກອນມະນຸດ ແລະ ຮັບປະກັນການສະໜອງງົບປະມານໃນແຕ່ລະປີ, ແຕ່ລະໄລຍະ ໃຫ້ໄປຕາມແຜນທີ່ລັດຖະບານ ແລະ ສະພາແຫ່ງຊາດໄດ້ຮັບຮອງເອົາ.

8. ທ່ານ ຄຳມູນ ວິພົງໄຊ ລັດຖະມົນຕີຊ່ວຍວ່າການ ກະຊວງພາຍໃນ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳ ແລະ ກຳນົດລະບຽບຫຼັກການໃນການຝຶກອົບຮົມ ແລະ ພັດທະນາ; ສັງລວມບັນດາແຜນການກໍ່ສ້າງ ແລະ ຝຶກອົບຮົມພະນັກງານ-ລັດຖະກອນ ໃນກົງຈັກຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ, ພ້ອມທັງຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດ.

9. ທ່ານ ດຣ. ນ. ສູນທອນ ໄຊຍະຈັກ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການກຳນົດນະໂຍບາຍໃນການຮ່ວມມືກັບຕ່າງປະເທດ ເພື່ອສ້າງບຸກຄະລາກອນໃຫ້ແກ່ ສປປ ລາວ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ລະດົມ ແລະ ຊອກແຫຼ່ງທຶນສະໜັບສະໜູນການກໍ່ສ້າງຊັບພະຍາກອນມະນຸດ.

10. ທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳວຽກງານໃນຂົງເຂດແຮງງານ ແລະ ສະຫວັດດີການ-ສັງຄົມ ໃນການສ້າງແຜນຈັດຕັ້ງປະຕິບັດ (ຊຸກຍູ້, ຕິດຕາມ, ປະເມີນຜົນ) ການຈັດຕັ້ງປະຕິບັດ ການພັດທະນາກຳລັງແຮງງານ ແລະ ສະຫວັດດີການສັງຄົມ.

11. ທ່ານ ບົວເງິນ ຊາພູວົງ ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳ ໃນການສ້າງແຜນຈັດຕັ້ງປະຕິບັດ, ຕິດຕາມ, ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດ ໃນການສຶກສາອົບຮົມ ໂຄສະນາເຜີຍແຜ່ວຽກງານພັດທະນາຊັບພະຍາກອນມະນຸດ ໃຫ້ຕິດພັນກັບການປົກປັກ ຮັກສາວັດທະນະທຳຂອງຊາດ ແລະ ການພັດທະນາຄວາມສີວິໄລທາງດ້ານຈິດໃຈ.

12. ທ່ານ ຮສ.ດຣ. ສົມອົກ ກິ່ງສະດາ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການຂຶ້ນແຜນ, ການສ້າງແຜນຈັດຕັ້ງປະຕິບັດ, ຕິດຕາມ, ປະເມີນຜົນ ດ້ານການພັດທະນາຊັບພະຍາກອນມະນຸດທາງດ້ານສຸຂະພາບ ພາລະນາໄມ ຊຶ່ງຕິດພັນກັບການໂພຊະນາການ ແລະ ການຮັກສາສຸຂະພາບ.

13. ທ່ານ ບຸນສະຫວາດ ບຸບຜາ ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການຂຶ້ນແຜນ, ການສ້າງແຜນຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ, ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດ ແນໃສ່ຮັບປະກັນດ້ານສິດທິມະນຸດ ແລະ ຄວາມເປັນທຳໃນສັງຄົມ ຕາມທີ່ໄດ້ບັນຍັດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

14. ທ່ານ ດຣ. ເພັດ ພົມພິພັກ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການຂຶ້ນແຜນ, ການສ້າງແຜນຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ, ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດກະສິກຳ ໃຫ້ກົມກຽວກັບຂະແໜງການອື່ນ ແລະ ມີກຳລັງແຮງງານໃນຂົງເຂດກະສິກຳ ທີ່ຮັບປະກັນການພັດທະນາແບບຍືນຍົງ.

15. ທ່ານ ນ. ເຂັມມະນີ ພົນເສນາ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສະຫະກຳ ແລະ ການຄ້າ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການຂຶ້ນແຜນ, ການສ້າງແຜນຈັດຕັ້ງ ປະຕິບັດ, ຊຸກຍູ້, ຕິດຕາມ, ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດໃນໂຂງເຂດອຸດສາຫະກຳ-ການຄ້າ ໃຫ້ກົມກຽວ ສອດຄ່ອງກັບຂະແໜງການອື່ນ ທັງຮັບປະກັນການພັດທະນາແບບຍືນຍົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

16. ທ່ານ ພົຈວ ວິໄລ ຫຼ້າຄຳຟອງ ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ ກະຊວງປ້ອງກັນປະເທດ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳ ການຂຶ້ນແຜນຄວາມຕ້ອງການ, ການສ້າງແຜນຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ, ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດ ໃຫ້ຕິດພັນກັບວຽກງານການສຶກສາປ້ອງກັນຊາດ.

17. ທ່ານ ພົຈວ ສົມແກ້ວ ສີລາວົງ ລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນຄວາມສະຫງົບ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳ ການຂຶ້ນແຜນຄວາມຕ້ອງການ ແລະ ຕິດຕາມ, ກວດກາ ການພັດທະນາຊັບພະຍາກອນມະນຸດ ໃຫ້ຕິດພັນກັບວຽກງານການສຶກສາ ປ້ອງກັນຄວາມສະຫງົບ.

18. ທ່ານ ຮສ. ສະມຸດທອງ ສົມພານິດ ຮອງຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການວາງແຜນຍຸດທະສາດ ດ້ານທິດສະດີການເມືອງ ການປົກຄອງ ໃນໄລຍະສັ້ນ ແລະ ໄລຍະຍາວຂອງພະນັກງານການນຳ ຂັ້ນຕ່າງໆຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ.

19. ທ່ານ ນາງ ຄຳຈັນ ພົມແສງສະຫວັນ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ, ກຳມະການ ຄຊພຊ, ຮັບຜິດຊອບຊີ້ນຳການຂຶ້ນແຜນ, ການສ້າງແຜນຈັດຕັ້ງປະຕິບັດ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນດ້ານການພັດທະນາຊັບພະຍາກອນມະນຸດ ໃນຄວາມກ້າວໜ້າຂອງແມ່ຍິງ ແລະ ສິດທິຂອງເດັກ.

20. ທ່ານ ສີສະຫວາດ ທິຣະວົງ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກຳມະການ ຄຊພຊ, ຮັບຜິດຊອບຊ່ວຍ ແລະ ປະສານງານກັບພາກທຸລະກິດພາຍໃນ ແລະ ຕ່າງປະເທດ ເພື່ອສຶກສາຄວາມເປັນໄປໄດ້ ແລະ ລົງທຶນໃສ່ວຽກງານການພັດທະນາຊັບພະຍາກອນມະນຸດ, ມີສ່ວນຮ່ວມໃນການຄົ້ນຄວ້າ ວາງແຜນການກໍ່ສ້າງ-ພັດທະນາຊັບພະຍາກອນມະນຸດ ໃນຂົງເຂດເສດຖະກິດຮ່ວມກັບພາກລັດ.

21. ທ່ານ ດຣ. ບຸນປັນ ໄຊມົນຕຣີ ຮັກສາການຫົວໜ້າກົມແຜນການ ສສກ, ກຳມະການ ຄຊພຊ, ຮັບຜິດຊອບນຳພາການຈັດຕັ້ງປະຕິບັດວຽກງານຂອງກອງເລຂາ ຄຊພຊ.

ມາດຕາ 2. ໃຫ້ບັນດາທ່ານ ທີ່ຖືກແຕ່ງຕັ້ງ ແລະ ຮັບມອບໝາຍໜ້າທີ່ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ພ້ອມທັງມີໜ້າທີ່ ແລະ ຂອບເຂດສິດຕາມຄວາມຮັບຜິດຊອບທີ່ກຳນົດໄວ້ໃນມາດຕາ 3 ແລະ ມາດຕາ 4 ຂອງດຳລັດສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013.

ມາດຕາ 3: ໃຫ້ແຕ່ລະກະຊວງ ແລະ ອົງການທຽບເທົ່າກະຊວງ ແຕ່ງຕັ້ງຄະນະປະສານງານກ່ຽວກັບວຽກງານການພັດທະນາ ຊັບພະຍາກອນມະນຸດ ຢູ່ໃນອົງກອນຂອງຕົນ ຊຶ່ງປະກອບດ້ວຍ ຫົວໜ້າກົມ ຫຼື ຮອງກົມທີ່ເຮັດວຽກຕິດພັນກັບການພັດທະນາຊັບພະຍາກອນມະນຸດ ພ້ອມດ້ວຍຫົວໜ້າພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງເພື່ອ ຊ່ວຍວຽກບັນດາສະມາຊິກ ຄຊພຊ, ເຂົ້າຮ່ວມກອງປະຊຸມລະດັບວິຊາການ ແລະ ປະສານງານໂດຍກົງກັບກອງເລຂາ ຄຊພຊ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ດຣ.ພັນຄຳ ວິພາວັນ

# ຕາຕະລາງສັງລວມສະຖິຕິລັດຖະກອນ ປະຈຳສົກປີ 2012-2013

ຊື່: ກະຊວງສຶກສາທິການ ແລະ ກິລາ

| ລ/ດ | ລາຍການ | | ຈຳນວນລັດຖະກອນ ລວມ | ຍິງ | ຊາຍ |
|---|---|---|---|---|---|
| I | ຈຳນວນລັດຖະກອນສຶກສາ ໃນຂອບເຂດທົ່ວປະເທດ (1+2) | | 80,329 | 39,929 | 40,400 |
| | 1 ຂັ້ນກະຊວງຄຸ້ມຄອງ | | 5,781 | 2,579 | 3,202 |
| | - ບໍລິຫານ | | 1,245 | 569 | 676 |
| | - ຄູ | | 4,042 | 1,583 | 2,459 |
| | 2 ພະແນກການຢູ່ຂັ້ນທ້ອງຖິ່ນ | | | | |
| | - ພະແນກຂັ້ນແຂວງ | | 6,190 | 3,044 | 3,146 |
| | - ບໍລິຫານ | | 1,520 | 550 | 970 |
| | - ຄູ | | 4,685 | 2,494 | 2,191 |
| | - ຫ້ອງການຂັ້ນເມືອງ | | 68,358 | 34,306 | 34,052 |
| | - ບໍລິຫານ | | 5,460 | 1,799 | 3,661 |
| | - ຄູ | | 62,883 | 32,507 | 30,376 |
| II | ຈຳນວນລັດຖະກອນທີ່ແຍກຕາມຂັ້ນເງິນເດືອນ (1+2+3+4+5) | | 80,329 | 39,929 | 40,410 |
| | 1. ຂັ້ນ I | | 34,128 | 16,760 | 17,368 |
| | 2. ຂັ້ນ II | | 9,790 | 4,811 | 4,979 |
| | 3. ຂັ້ນ III | | 14,337 | 7,362 | 6,975 |
| | 4. ຂັ້ນ IV | | 19,266 | 9,514 | 9,752 |
| | 5. ຂັ້ນ V | | 2,801 | 1,465 | 1,336 |

III. ຈຳນວນລັດຖະກອນ ແຍກຕາມເກນອາຍຸ

| ອາຍຸຕ່ຳກວ່າ 25 ປີ | | ອາຍຸ 25 ຫາ 30 ປີ | | ອາຍຸ 31 ຫາ 35 ປີ | | ອາຍຸ 36 ຫາ 40 ປີ | | ອາຍຸ 41 ຫາ 45 ປີ | | ອາຍຸ 46 ຫາ 50 ປີ | | ອາຍຸ 51 ຫາ 55 ປີ | | ອາຍຸ 56 ຫາ 60 ປີ | | ອາຍຸ 61 ປີ ຂຶ້ນໄປ | | ປາຍ | | ຕົ້ນ | | ປະຖົມ | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | | | |
| 15,017 | 9,044 | 20,983 | 11,143 | 12,087 | 5,504 | 9,160 | 4,348 | 9,173 | 4,582 | 7,879 | 3,590 | 4,469 | 1,494 | 1,574 | 255 | 121 | 3 | 0 | 0 | 6 | 5 | 12 | 7 | 80,329 | 39,929 | 40,400 |

IV. ຈຳນວນລັດຖະກອນ ທີ່ແຍກຕາມຂັ້ນວິຊາສະເພາະ

| ຊັ້ນປະລິນຍາເອກ | | ເໜືອປະລິນຍາໂທ | | ຊັ້ນປະລິນຍາໂທ | | ເໜືອປະລິນຍາຕີ, ລົງເລິກຂະແໜງ | | ຊັ້ນປະລິນຍາຕີ | | ຊັ້ນສູງ ຫຼື ທຽບເທົ່າ | | ຊັ້ນກາງ | | ຊັ້ນຕົ້ນ | | ບໍ່ມີຊັ້ນວິຊາສະເພາະ | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | | | | |
| 141 | 32 | 23 | 4 | 1097 | 328 | 15 | 4 | 13474 | 5732 | 23597 | 12408 | 33647 | 17969 | 8126 | 3355 | 209 | 97 | | 80,329 | 39,929 | 40,400 |

| | | | | | |
|---|---|---|---|---|---|
| | ຈຳນວນລັດຖະກອນກອນອອກຮູບການຕ່າງໆລວມທັງໝົດ | | 1,523 | 535 | 988 |
| V | ຈຳນວນລັດຖະກອນ ທີ່ອອກໃນຮູບການຕ່າງໆ (1+2+3+4+5+6+7) | | *1,102* | *339* | *763* |
| | 1. ອອກພັກຜ່ອນຮັບເບັ້ຍບຳນານ | | 628 | 197 | 431 |
| | 2. ອອກອຸດໜູນເທື່ອດຽວ (ບຳເນັດ) | | 148 | 57 | 91 |
| | 3. ເສັຍຊີວິດ | | 115 | 40 | 75 |
| | 4. ປະລະໜ້າທີ່ | | 54 | 23 | 31 |
| | 5. ຖືກປະຕິບັດວິໄນ ( ໄລ່ອອກຈາກການເປັນລັດຖະກອນ ) | | 127 | 8 | 119 |
| | 6. ລາອອກ (ບໍ່ເອົາບຳເນັດ) | | 2 | 5 | 3 |
| | 7. ເສັຽກຳລັງ ແຮງງານ | | 28 | 9 | 19 |
| | ຍົກຍ້າຍໄປຢູ່ພາກສ່ວນອື່ນ (1+2) | | 421 | 196 | 225 |
| | 1. ກະຊວງ,ອົງການ, ແຂວງ, ນະຄອນຫລວງ | | 421 | 196 | 225 |
| | 2. ຍົກຍ້າຍໄປຢູ່ກຳລັງປະກອບອາວຸດ ( ທະຫານ, ຕຳຫລວດ ) | | 0 | 0 | 0 |
| | | | | | |
| VI | ຈຳນວນລັດຖະກອນທີ່ເຂົ້າເພີ່ມໃນຮູບການຕ່າງໆ | | 2,698 | | |
| | 1. ຈຳນວນຕົວເລກລັດຖະກອນທີ່ໄດ້ຮັບການອະນຸມັດ | | | | |
| | 2. ຮັບເຂົ້າໃໝ່ຕາມຈຳນວນຕົວເລກລັດຖະກອນທີ່ໄດ້ຮັບການອະນຸມັດ (ໂກຕ້າ): | | 2,422 | | |
| | 3. ຍົກຍ້າຍມາຈາກຝ່າຍກຳລັງປະກອບອາວຸດ ( ທະຫານ, ຕຳຫລວດ ) | | 0 | 0 | 0 |
| | 4. ຍົກຍ້າຍມາຈາກລັດວິສະຫະກິດ | | 1 | 1 | 0 |
| | 5. ຍົກຍ້າຍມາຈາກພາກສ່ວນອື່ນ ( ກະຊວງ,ອົງການ, ແຂວງ..... ) | | 275 | 168 | 107 |
| VII | ຈຳນວນພະນັກງານຕາມສັນຍາ (1+2) | | | | |
| | 1. ພະນັກງານຕາມສັນຍາບໍລິຫານຮັບໃຊ້ | | *349* | *126* | 223 |
| | - ຮັບເຂົ້າໂດຍບໍ່ນອນຢູ່ໃນຈຳນວນຕົວເລກທີ່ລັດຖະບານອະນຸມັດ (ຈ້າງເອງ) | | *168* | *88* | *80* |
| | 2. ພະນັກງານຕາມສັນຍາວິຊາການ | | 929 | 553 | 376 |
| | - ຮັບເຂົ້າໂດຍບໍ່ນອນຢູ່ໃນຈຳນວນຕົວເລກທີ່ລັດຖະບານອະນຸມັດ (ຈ້າງເອງ) | | *1,097* | *641* | *456* |

| VIII | ຈຳນວນຜູ້ທີ່ໄດ້ຮັບຕຳແໜ່ງບໍລິຫານ ປະເພດຕ່າງໆ | | | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ປະເພດ | ປະເພດ 1 | | ປະເພດ 2 | | ປະເພດ 3 | | ປະເພດ 4 | | ປະເພດ 5 | | ປະເພດ | | ປະເພດ | | ປະເພດ | | | | |
| | ຕຳແໜ່ງ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | ລ | ຍ | | | |
| | ບໍລິຫານ | 3 | 0 | 58 | 5 | 254 | 40 | 1,075 | 154 | 2,744 | 438 | 10,465 | 2,190 | 10,300 | 3,619 | 6,468 | 3,263 | | *31,367* | *9,709* | *21,658* |

| | | | | |
|---|---|---|---|---|
| IX | ຈຳນວນຄວາມຕ້ອງການລັດຖະກອນໃໝ່ສົກປີ 2012-2013 | 11,197 | | |
| | ຂັ້ນສູນກາງ ແລະ ອ້ອມຂ້າງກະຊວງ | 602 | | |
| | ຂັ້ນແຂວງ | 553 | | |
| | ຂັ້ນເມືອງ | 10,042 | | |

ທີ່ ກະຊວງສຶກສາທິການ ແລະ ກິລາ, ວັນທີ
ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ

ທ່ານລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ